ມິຖຸນາ,

ເຖິງ ຄອບຄົວຂອງ

ໃນຣະດູ ໃບໄມ້ປົ່ງ (Spring) ທີ່ຜ່ານມານີ້, ນັກຮຽນ ທັງໝົດ ນັບຕັ້ງແຕ່ ຢູ່ຊັ້ນ ປ. 1 ຈົນເຖິງ ປ. 6 ໄດ້ຜ່ານການ ສອບເສັງ ໃນດ້ານການອ່ານ. ການສອບເສັງ ດັ່ງກ່າວນີ້ ປະກອບດ້ວຍ ເຄື່ອງທົດສອບ ທີ່ເຫັນສົມຄວນ ໂດຍສອບແບບ ເປັນສ່ວນບຸກຄົນ. ນັກຮຽນແຕ່ລະຄົນ ຈະອ່ານໜັງສື ຢູ່ໃນໃຈໂດຍບໍ່ອອກສຽງ ແລ້ວຈຶ່ງອ່ານອອກສຽງ ໃຫ້ຄຣູຟັງ. ຫລັງຈາກ ການອ່ານແລ້ວ ນັກຮຽນ ທຸກຄົນ ຈຶ່ງອະທິບາຍ ເລົ່າເຣື້ອງທີ່ໄດ້ອ່ານມານັ້ນ ພ້ອມທັງ ຕອບຄຳຖາມບາງອັນ.

ພວກຂ້າພະເຈົ້າ ເຊື່ອວ່າຂໍ້ມູນ ລາຍລະອຽດ ກ່ຽວກັບລູກ ຂອງທ່ານ ທີ່ໄດ້ຮັບມານັ້ນ ມີປະໂຍດພໍສົມຄວນ. ພວກເຮົາໄດ້ ມີຄວາມເຂົ້າໃຈ ດີຂຶ້ນວ່າ ຄວາມສາມາດ ດ້ານການ ອ່ານຂອງລູກທ່ານ ຢູ່ຂັ້ນໃດ. ລາຍລະອຽດ ເຫລົ່ານີ້ ຈະຊ່ວຍ ໃຫ້ທາງໂຮງຮຽນ ວາງແຜນ ກະຕຽມວ່າ ນັກຮຽນ ຜູ້ໃດ ຈະຕ້ອງການ ທີ່ຈະຕ້ອງຮຽນອ່ານເພີ້ມ ແລະກໍຍັງຈະ ຊ່ວຍ ພວກເຮົາໃນການ ວາງແຜນ ອອກແບບ ແຕ່ງບົດຮຽນ ທີ່ເໝາະສົມ.

ຜົນການສອບ ໃນຄັ້ງນີ້ ລູກຂອງທ່ານໄດ້ຮັບ ຄະແນນ ຕ່ຳກວ່າ ຊັ້ນຮຽນ. ເຖິງຢ່າງໃດກໍຕາມ, ຖ້າລູກຂອງທ່ານ ຫາກກຳລັງ ຮຽນພາສາອັງກິດຢູ່ ເດັກນັ້ນຈະຕ້ອງໃຊ້ເວລາ ສາມເຖິງຫ້າປີ ກ່ອນທີ່ຈະໄດ້ຮຽນຮູ້ ຄຳສັບ ພຽງພໍ ທີ່ຈະສາມາດ ອ່ານພາສາ ອັງກິດໄດ້. ມັນເປັນສິ່ງທີ່ສຳຄັນ ທີ່ສຸດ ທີ່ລູກຂອງທ່ານນັ້ນ ສາມາດອ່ານດ້ວຍຕົນເອງໄດ້ (ຊຶ່ງບໍ່ພຽງແຕ່ເຂົ້າໃຈ ຄຳສັບ ແຕ່ເຂົ້າໃຈ ໃນສິ່ງທີ່ໄດ້ອ່ານລົງໄປນັ້ນ).

ນັກຮຽນທີ່ບໍ່ມີຄວາມ ສາມາດໃນການ ອ່ານໜັງສືນັ້ນ ຈະມີປັນຫາຫລາຍຂຶ້ນ ໃນການບ້ານ ແລະການຮ່ຳຮຽນ ແລະອາດຈະເສັຍຄວາມສົນໃຈ ໃນການຮ່ຳຮຽນ ເລີຍກໍໄດ້. ພວກເຮົາຈະບໍ່ຍອມໃຫ້ເປັນຢ່າງນັ້ນ. ເລີ້ມຕົ້ນໃນເດືອນ ກັນຍາ (9), ລູກຂອງທ່ານ ຈະເຂົ້າຮ່ວມໃນກຸ່ມ ນັກຮຽນ ຝຶກອ່ານ ແລະທາງໂຮງຮຽນ ຈະຕິດຕາມຄວາມກ້າວໜ້າ ຂອງລູກທ່ານ ຢ່າງໃກ້ຊິດ. ແຕ່ໃນເວລານີ້ ສິ່ງທີ່ສຳຄັນ ທີ່ສຸດ ທີ່ທ່ານຈະສາມາດເຮັດໄດ້ ຢູ່ທີ່ບ້ານ ໃນຣະດູຮ້ອນນີ້ ກໍຄືອ່ານໃຫ້ລູກຟັງ ຫລືນັ່ງອ່ານນຳທຸກໆວັນ ຢ່າງຕ່ຳ ວັນລະ 20 ນາທີ ແລະສົນທະນາ ກັນກ່ຽວກັບ ເຣື້ອງ ທີ່ໄດ້ອ່ານນັ້ນ. ເດັກທຸກຄົນ ຮຽນອ່ານໂດຍ ການອ່ານ ດ້ວຍຕົນເອງ ແລະມີຜູ້ອ່ານໃຫ້ຟັງ.

ໂດຍການຮ່ວມມືກັນ, ພວກເຮົາຈະສາມາດ ຊ່ວຍລູກຂອງທ່ານໃຫ້ສາມາດ ອ່ານດ້ວຍຕົນເອງໄດ້, ຊຶ່ງບໍ່ພຽງພໍແຕ່ຈະສາມາດ ເຂົ້າໃຈຄຳສັບໄດ້, ແຕ່ຈະສາມາດ ເຂົ້າໃຈສິ່ງທີ່ ໄດ້ອ່ານນັ້ນດ້ວຍ. ຖ້າທ່ານຫາກມີຄຳຖາມອັນໃດ, ກະຣຸນາ ຕິດຕໍ່ຫາຂ້າພະເຈົ້າ ໄດ້ທຸກເວລາ.

ດ້ວຍຄວາມນັບຖື,

ຟແຣ້ງຄ໌ ຈອນສັນ (Frank Johnson)
ຫົວໜ້າໝວດໂຮງຮຽນ
952-928-6600